ໃນໂອກາດປີໃໝ່ສາກົນ 2005 ທີ່ຈະມາເຖິງ ສາວຫຼັກເຈັດຂໍອວຍພອນແດ່ຄຣູບາອາຈານ ແລະອະດີດນັກສຶກສາຈາກວິທຍາລັຍຄຣູສວັນນະເຂດທຸກໆທ່ານຈົ່ງມີແຕ່ຄວາມສຸກທີ່ເຕັມໄປດ້ວຍ

ພອນທິບສີ່ປະການຄື: ອາຍຸ ວັນນະ ສຸຂະ ພະລະ ດ້ວຍເທີ້ນ.

ພໍເມື່ອລຶກເລື່ອນຍ້າຍ ປີເກົ່າກາຍໜີ
ປີໃໝ່ວຽນມາເຖິງ ປຸ່ນຣະດູໄປແລ້ວ
ສຽງແຊວໆຄົນໂຮຮ້ອງ ສະຫຼອງວັນປີໃໝ່
ຂໍອວ່ຍຊັຍສິ່ງໃຫ້ ປະຊາເຊື້ອຄູ່ຊູ່ຄົນ ທ່ານເອີຍ

ມີກາກະຣາເລີ້ມຕົ້ນ ເປັນປີໃໝ່ສາກົນ
ໂລກາວົນວຽນໝູນ ປຸ່ນໄປທາງໜ້າ
ປີນີ້ສອງພັນຫ້າ ປວງປະຊາກໍຊຶດຊື່ນ
ສຽງໄຊໂຍຄຶກຄື້ນ ໃນວັນກ້າຮ່ວມສະຫຼອງ ທ່ານເອີຍ

ຂໍໃຫ້ພວກພີ່ນ້ອງ ນ້ອຍໃຫຍ່ຍິງຊາຍ
ຈົ່ງຄອງຄວາມສະບາຍສຸກ ທຸກຢ່າມີມາໃກ້
ຝູງໝູ່ພັຍລີນັ້ນ ອັນຕະລາຍຢ່າມາຜ່າ
ທັງໂລຄາພະຍາດຮ້າຍ ໃຫ້ຫາຍສຽ້ງຫ່າງໃກ ທ່ານເອີຍ

ຂໍໃຫ້ທ່ານນຶກໄດ້ ສົມດັ່ງມະໂນໝາຍ
ຄວາມສຸກທາງກາຍໃຈ ໃຫ້ຫຼັ່ງໄຫຼມາໂຮມທ່ານ

ອັນວ່າເງິນຄຳແກ້ວ          ແວວມະນີໃຫ້ລົ້ນອັ່ງ
ສິ່ງໃດດີໃຫ້ຫຼັ່ງເຂົ້າ          ພັຍຮ້າຍໃຫ້ແລ່ນກາຍ  ທ່ານເອີຍ

ຂໍໃຫ້ອ້າຍ  ເອື້ອຍ  ນ້ອງ   ອາຈານເກົ່າລວມທັງສິດ
ອະດີດເຮົາເຄີຍຮັກ         ຮ່ວມກັນແຕ່ປາງນັ້ນ
ຫຼັກເຈັດເຮົາຍັ້ງຝັງຫມັ້ນ   ດອມກັນກິນລວມກັນຢູ່
ບັນດາຄຣູທຸກທົ່ວຫນ້າ   ຊິມາພໍ້ພົບກັນ   ທ່ານເອີຍ

ສາວຫຼັກເຈັດຈຶ່ງກ່າວຕ້ານ  ຊຽນສານສິ່ງເປັນຄຳກອນ
ພອນທິບໃນໂລກາ           ໃຫ້ຫຼັ່ງມາໂຮມທ້ານ
ອາຍຸຍືນຍາວຫມັ້ນ         ພັນປີຢ່າເຫຼືອງລ່າ
ສອງພັນຫ້າ  ເປັນປີຊັຍໄຊກລ້ຳ   ເງິນຄຳແກ້ວຊິຫຼັ່ງມາ   ທ່ານເອີຍ  ສາທຸ!  ສາທຸ!  ສາທຸ!

ໂດຍ:  ສາວຫຼັກເຈັດ